ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີເຕັ້ນແອໂຣບິກ ເພື່ອສຸຂະພາບ ເນື່ອງໃນໂອກາດລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ




ໃນວັນທີ 23 ທັນວາ 2022 ທີ່ຜ່ານ ທະນາຄານແຫ່ງ ສປປ ລາວ (ທຫລ) ຈັດກິດຈະກຳເຕັ້ນແອໂຣບິກ ເພື່ອລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ປະຈຳປີ 2022 ໃນຫົວຂໍ້ "ຮ່ວມກັນເຄື່ອນໄຫວເພື່ອຢຸດໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ" ໃນຂະແໜງການທະນາຄານ ໂດຍການເປັນປະທານຮ່ວມຂອງ ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ແລະ ທ່ານ ນ. ມະນີວອນ ຫຼວງສີມບັດ ຫົວໜ້າຫ້ອງການ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງແລະ ເດັກ ໂດຍມີຄະນະກົມ, ບັນດາກົມພາຍໃນ ທຫລ ແລະ ທະນາຄານທຸລະກິດ 4 ແຫ່ງເຂົ້າຮ່ວມ.

ຈຸດປະສົງພິທີດັ່ງກ່າວນີ້ ເພື່ອໂຄສະນາ-ເຜີຍແຜ່, ປູກຈິດສໍານຶກ ແລະ ປຸກລະດົມຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ເພື່ອຮັບປະກັນສິດສະເໝີພາບ ແລະ ການພັດທະນາທີ່ເທົ່າທຽມກັນ ລະຫວ່າງ ຍິງ-ຊາຍ ເວົ້າລວມ, ເວົ້າສະເພາະແມ່ນໃນຂະແໜງການທະນາຄານ, ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ ໂດຍຮ່ວມກັນລຶບລ້າງການໃຊ້ຄວາມຮຸນແຮງທຸກຮູບແບບຕໍ່ແມ່ຍິງ ແລະ ເດັກຍິງໃຫ້ໄດ້ພາຍໃນປີ 2030, ໄດ້ຮຽກຮ້ອງໃຫ້ທຸກຂະແໜງການໃນທົ່ວສັງຄົມໃຫ້ເພີ່ມທະວີຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ສ້າງເງື່ອນໄຂ ຊຸກຍູ້ສົ່ງເສີມການປະຕິບັດວຽກງານດັ່ງກ່າວຢ່າງເລິກເຊິ່ງ, ຕໍ່ເນື່ອງ ແລະ ກວ້າງຂວາງ ໂດຍສະເພາະພາຍໃນຂະແໜງການທະນາຄານ ພາຍໃຕ້ການຊີ້ນໍາ-ນໍາພາຂອງຄະນະບໍລິຫານງານພັກ ຄະນະຜູ້ອໍານວຍການ ຄະນະກໍາມາທິການເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກຍິງ. ໄດ້ເປັນເຈົ້າການຜັນຂະຫຍາຍບັນດານະໂຍບາຍຕ່າງໆໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງຕົນ, ເອົາໃຈໃສ່ບໍາລຸງສ້າງພະນັກງານເພດຍິງ ທີ່ຢູ່ໃນແຜນກໍານົດພະນັກງານນໍາພາຄຸ້ມຄອງໄປຍົກລະດັບດ້ານວິຊາສະເພາະ ແລະ ວິຊາການຕ່າງໆ ຢ່າງເປັນລະບົບ; ຊຸກຍູ້ສົ່ງເສີມການເຂົ້າເຖິງການບໍລິການຂອງຂະແໜງການທະນາຄານ ແລະ ຫົວໜ່ວຍທຸລະກິດຂອງເພດຍິງ. ນອກຈາກນີ້ກໍ່ໄດ້ມີນະໂຍບາຍພິເສດໃຫ້ແກ່ເພດຍິງເປັນຕົ້ນ ນະໂຍບາຍກວດສຸຂະພາບປະຈໍາປີສໍາລັບພະນັກງານເພດຍິງທີ່ເຮັດວຽກກັບທາດເບື່ອ, ນະໂຍບາຍອຸດໜູນໃຫ້ພະນັກງານຍິງ, ນະໂຍບາຍອຸດໜູນເວລາເກີດລູກ, ນະໂຍບາຍອຸດໜູນເດັກ ແລະ ມີໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ ໃນການສິດສອນເດັກໃຫ້ມີພັດທະນາການທາງດ້ານມັນສະໝອງ, ສຸຂະພາບທີ່ແຂງແຮງຕາມຫຼັກສູດຂອງກະຊວງສຶກສາ ແລະ ກິລາ ແລະ ອື່ນໆ.



\# ຂ່າວ ແລະ ພາບ ໂດຍ: ນ ທິດສະບາ ທໍາມະວົງສົງ

*ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ*